## ສາລະບານ


ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ..........4
ພາກທີ I ບົດບັນຍັດທົ່ວໄປ ..........4
ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ..........4
ມາດຕາ 2. ການປົກຄອງທ້ອງຖິ່ນ ..........4
ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດລວມຂອງອົງການປົກຄອງທ້ອງຖິ່ນ ..........5
ມາດຕາ 4. ສິດ ແລະ ໜ້າທີ່ລວມຂອງອົງການປົກຄອງທ້ອງຖິ່ນ ..........5
ມາດຕາ 5. ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງທ້ອງຖິ່ນ ..........5
ພາກທີ II ອົງການປົກຄອງ ແຂວງ, ນະຄອນ ..........6
ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ ..........6
ມາດຕາ 6. ແຂວງ, ນະຄອນ ..........6
ມາດຕາ 7. ພາລະບົດບາດຂອງອົງການປົກຄອງແຂວງ, ນະຄອນ ..........6
ມາດຕາ 8. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງແຂວງ, ນະຄອນ ..........6
ມາດຕາ 9. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການປົກຄອງແຂວງ, ນະຄອນ ..........7
ມາດຕາ 10. ທີ່ຕັ້ງ ແລະ ພາລະບົດບາດຂອງພະແນກຂອງຂະແໜງການສາຍຕັ້ງ ແລະຫ້ອງການເທົ່າປະຈຳ ແຂວງ, ນະຄອນ ..........7
ໝວດທີ II ການສ້າງຕັ້ງແຂວງ, ນະຄອນ ..........7
ມາດຕາ 11. ການສ້າງຕັ້ງ ..........7
ມາດຕາ 12. ເງື່ອນໄຂການສ້າງຕັ້ງ ..........7
ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ ..........8
ມາດຕາ 13. ພາລະບົດບາດຂອງເຈົ້າແຂວງ, ເຈົ້າຄອງນະຄອນ ..........8
ມາດຕາ 14. ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ ..........8
ມາດຕາ 15. ສິດ ແລະ ໜ້າທີ່ຂອງຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ..........10
ມາດຕາ 16. ການແຕ່ງຕັ້ງ ແລະ ອາຍຸການຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ..........10
ໝວດທີ IV ກອງປະຊຸມຂອງອົງການປົກຄອງ ແຂວງ, ນະຄອນ ..........10
ມາດຕາ17. ກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ ..........10
ມາດຕາ 18. ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ ..........11
ພາກທີ III ອົງການປົກຄອງເມືອງ ..........11
ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ ..........11
ມາດຕາ 19. ເມືອງ ..........11

ມາດຕາ 20. ພາລະບົດບາດ ຂອງ ອົງການປົກຄອງເມືອງ....................................................11
ມາດຕາ 21. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງເມືອງ .....................12
ມາດຕາ 22. ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການປົກຄອງເມືອງ .................................12
ມາດຕາ 23. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເມືອງ 12
ໝວດທີ II ການສ້າງຕັ້ງເມືອງ ...........................................................................................13
ມາດຕາ 24. ການສ້າງຕັ້ງ .................................................................................................13
ມາດຕາ 25. ເງື່ອນໄຂການສ້າງຕັ້ງ ....................................................................................13
ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າເມືອງ...................................................13
ມາດຕາ 26. ພາລະບົດບາດຂອງເຈົ້າເມືອງ ..........................................................................13
ມາດຕາ 27. ສິດ ແລະ ໜ້າທີ່ຂອງເຈົ້າເມືອງ ........................................................................13
ມາດຕາ 28. ສິດ ແລະ ໜ້າທີ່ຂອງຮອງເຈົ້າເມືອງ .................................................................14
ມາດຕາ 29. ການແຕ່ງຕັ້ງ, ອາຍຸການຂອງເຈົ້າເມືອງ ແລະ ຮອງເຈົ້າເມືອງ ...............................15
ໝວດທີ IV ກອງປະຊຸມຂອງອົງການປົກຄອງເມືອງ .............................................................15
ມາດຕາ 30. ກອງປະຊຸມຂອງອົງການປົກຄອງເມືອງ............................................................15
ມາດຕາ 31. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງເມືອງ................................15
ພາກທີ IV ອົງການປົກຄອງເທດສະບານ ...............................................................................16
ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ...................................................16
ມາດຕາ 32. ເທດສະບານ .................................................................................................16
ມາດຕາ 33. ພາລະບົດບາດຂອງອົງການປົກຄອງເທດສະບານ ................................................16
ມາດຕາ 34. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງເທດສະບານ ............16
ມາດຕາ 35. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການປົກຄອງເທດສະບານ .........................17
ມາດຕາ 36. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເທດສະບານ....................................................................................................................17
ໝວດທີ II ການສ້າງຕັ້ງເທດສະບານ ....................................................................................17
ມາດຕາ 37. ການສ້າງຕັ້ງ .................................................................................................17
ມາດຕາ 38. ເງື່ອນໄຂການສ້າງຕັ້ງ ....................................................................................18
ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫົວໜ້າເທດສະບານ ....................................18
ມາດຕາ 39. ພາລະບົດບາດ ຂອງຫົວໜ້າເທດສະບານ.........................................................18
ມາດຕາ 40. ສິດ ແລະ ໜ້າທີ່ຂອງຫົວໜ້າເທດສະບານ .......................................................18
ມາດຕາ 41. ສິດ ແລະ ໜ້າທີ່ຂອງຮອງຫົວໜ້າເທດສະບານ .................................................20
ມາດຕາ 42. ການແຕ່ງຕັ້ງ ແລະ ອາຍຸການຂອງຫົວໜ້າ, ຮອງຫົວໜ້າເທດສະບານ .....................20

ມາດຕາ 43. ລາຍຮັບຂອງເທດສະບານ ....................................................................20
ໝວດທີ IV ກອງປະຊຸມຂອງອົງການປົກຄອງເທດສະບານ ....................................................20
ມາດຕາ 44. ກອງປະຊຸມຂອງອົງການປົກຄອງເທດສະບານ...................................................20
ມາດຕາ 45. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງເທດສະບານ.......................21
ພາກທີ V ອົງການປົກຄອງບ້ານ ..........................................................................................21
ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ................................................21
ມາດຕາ 46. ບ້ານ.............................................................................................................21
ມາດຕາ 47. ພາລະບົດບາດຂອງອົງການປົກຄອງບ້ານ.........................................................22
ມາດຕາ 48. ໂຄງປະກອບການຈັດຕັ້ງຂອງອົງການປົກຄອງບ້ານ.............................................22
ມາດຕາ 49. ການເລືອກຕັ້ງນາຍບ້ານ ..................................................................................22
ໝວດທີ II ການສ້າງຕັ້ງບ້ານ...............................................................................................22
ມາດຕາ 50. ການສ້າງຕັ້ງ ...................................................................................................22
ມາດຕາ 51. ເງື່ອນໄຂການສ້າງຕັ້ງ .......................................................................................22
ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນາຍບ້ານ ...................................................23
ມາດຕາ 52. ພາລະບົດບາດຂອງນາຍບ້ານ............................................................................23
ມາດຕາ 53. ສິດ ແລະ ໜ້າທີ່ຂອງນາຍບ້ານ .........................................................................23
ມາດຕາ 54. ສິດ ແລະ ໜ້າທີ່ຂອງຮອງນາຍບ້ານ ...................................................................24
ໝວດທີ IV ກອງປະຊຸມຂອງອົງການປົກຄອງບ້ານ ................................................................24
ມາດຕາ 55. ກອງປະຊຸມຂອງອົງການປົກຄອງບ້ານ ...............................................................24
ມາດຕາ 56. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງບ້ານ .................................24
ມາດຕາ 57. ກອງປະຊຸມບ້ານ.............................................................................................25
ພາກທີ VI ລະບອບວິທີເຮັດວຽກ ແລະ ການເງິນ ຂອງອົງການປົກຄອງທ້ອງຖິ່ນ................................25
ມາດຕາ 58. ລະບອບວິທີເຮັດວຽກຂອງອົງການປົກຄອງທ້ອງຖິ່ນ ............................................25
ມາດຕາ 59. ການເງິນຂອງອົງການປົກຄອງທ້ອງຖິ່ນ ..............................................................26
ພາກທີ VII ບົດບັນຍັດສຸດທ້າຍ ...........................................................................................26
ມາດຕາ 60. ຕາປະທັບ .......................................................................................................26
ມາດຕາ 61. ການຈັດຕັ້ງປະຕິບັດ .........................................................................................26
ມາດຕາ 62. ຜົນສັກສິດ ......................................................................................................26

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03 / ສພຊ

ນະຄອນຫລວງວຽງຈັນ, ວັນທີ 21 ຕຸລາ 2003

# ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ພາກທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ

ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ວາງອອກເພື່ອກຳນົດຫຼັກການພື້ນຖານ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະລະບອບແບບແຜນວິທີເຮັດວຽກຂອງອົງການປົກຄອງທ້ອງຖິ່ນ; ແນໃສ່ປັບປຸງ ແລະກໍ່ສ້າງອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບເອກະພາບໃນທົ່ວປະເທດ; ຮັບປະກັນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດ ຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ; ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນ ປະໂຫຍດອັນຊອບທຳຂອງປະຊາຊົນ.

### ມາດຕາ 2. ການປົກຄອງທ້ອງຖິ່ນ

ການປົກຄອງທ້ອງຖິ່ນແມ່ນການຄຸ້ມຄອງບໍລິຫານລັດ ຊຶ່ງດຳເນີນໂດຍອົງການປົກຄອງທ້ອງຖິ່ນ. ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງການປົກຄອງທ້ອງຖິ່ນອອກເປັນ ສາມ ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນແຂວງມີ ແຂວງ ແລະ ນະຄອນ; ໃນກໍລະນີຈຳເປັນກໍອາດສ້າງຕັ້ງເຂດພິເສດຂຶ້ນ;

ຂັ້ນເມືອງມີ ເມືອງ ແລະ ເທດສະບານ;

ຂັ້ນບ້ານມີ ບ້ານ.

ລັດຖະບານມອບຄວາມຮັບຜິດຊອບໃຫ້ອົງການປົກຄອງທ້ອງຖິ່ນ ເປັນຜູ້ຄຸ້ມຄອງດິນແດນ, ຊັບພະຍາກອນທຳມະຊາດ ແລະ ປະຊາຊົນ ເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາທ້ອງຖິ່ນຂອງຕົນ ໃຫ້ມີຄວາມຈະເລີນ, ຮັ່ງມີ ແລະ ຜາສຸກ.

### ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດລວມຂອງອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນ ແມ່ນການຈັດຕັ້ງບໍລິຫານລັດຂັ້ນທ້ອງຖິ່ນ, ມີພາລະບົດບາດເປັນຕົວແທນ ແລະຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະ ທຳ - ສັງຄົມ, ການກໍ່ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໆ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນທ້ອງຖິ່ນ ແລະ ວຽກງານການຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ.

ອົງການປົກຄອງແຂວງແມ່ນເຈົ້າແຂວງ, ອົງການປົກຄອງນະຄອນແມ່ນເຈົ້າຄອງນະຄອນ, ອົງການປົກຄອງເມືອງແມ່ນເຈົ້າເມືອງ, ອົງການປົກຄອງເທດສະບານແມ່ນຫົວໜ້າເທດສະບານ ແລະອົງການປົກຄອງບ້ານແມ່ນນາຍບ້ານ ເປັນຫົວໜ້າ.

### ມາດຕາ 4. ສິດ ແລະ ໜ້າທີ່ລວມຂອງອົງການປົກຄອງທ້ອງຖິ່ນ

ສິດ ແລະ ໜ້າທີ່ລວມຂອງອົງການປົກຄອງທ້ອງຖິ່ນມີດັ່ງນີ້ :

1. ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງ ຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ວາງແຜນຍຸດທະສາດ, ແຜນພັດທະນາ ເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ບົນພື້ນຖານແຜນຍຸດທະສາດແຫ່ງຊາດ;
3. ຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຊັບພະຍາກອນແຫ່ງຊາດ, ສິ່ງແວດລ້ອມ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ອອກມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງເສດຖະ ກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຂົງເຂດ ຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບລະບຽບກົດໝາຍ;
5. ຕິດຕາມກວດກາການປະຕິບັດໜ້າທີ່ວຽກງານຂອງອົງການຈັດຕັ້ງ ທີ່ຢູ່ພາຍໃນຄວາມຮັບຜິດຊອບຂອງຕົນ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 5. ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງທ້ອງຖິ່ນ

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງທ້ອງຖິ່ນ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ຂັ້ນບ້ານຂຶ້ນກັບຂັ້ນເມືອງ, ຂັ້ນເມືອງຂຶ້ນກັບຂັ້ນແຂວງ, ຂັ້ນແຂວງຂຶ້ນກັບລັດຖະບານ ໂດຍມີອົງຄະນະພັກຂັ້ນຂອງຕົນເປັນຜູ້ນຳພາ ແລະ ຮັບຜິດຊອບບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ.

ອົງການປົກຄອງທ້ອງຖິ່ນມີລະບອບປະຊຸມ ເພື່ອປຶກສາຫາລື ແລະ ຕົກລົງບັນຫາສຳຄັນຂອງຕົນ.

## ພາກທີ II ອົງການປົກຄອງ ແຂວງ, ນະຄອນ

## ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ

### ມາດຕາ 6. ແຂວງ, ນະຄອນ

ແຂວງ ແມ່ນເຂດການປົກຄອງທ້ອງຖິ່ນ ທີ່ປະກອບດ້ວຍ ຫຼາຍເມືອງ ແລະ ເທດສະບານ.

ນະຄອນ ແມ່ນເຂດການປົກຄອງທ້ອງຖິ່ນໃນຕົວເມືອງໃຫຍ່ ທີ່ມີຊຸມຊົນໜາແໜ້ນ ຊຶ່ງປະກອບດ້ວຍຫຼາຍເທດສະບານ, ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະການບໍລິການ ທີ່ມີບົດບາດຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ. ສຳລັບ ນະຄອນຫຼວງວຽງຈັນ ປະກອບດ້ວຍຫຼາຍເມືອງ ແລະ ຫຼາຍເທດສະບານ.

### ມາດຕາ 7. ພາລະບົດບາດຂອງອົງການປົກຄອງແຂວງ, ນະຄອນ

ອົງການປົກຄອງແຂວງ, ນະຄອນ ມີພາລະບົດບາດຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການກໍ່ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໆ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທ້ອງຖິ່ນ ແລະ ປະຕິບັດວຽກງານການຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ .

### ມາດຕາ 8. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງແຂວງ, ນະຄອນ

ກົງຈັກຂອງອົງການປົກຄອງແຂວງ, ນະຄອນປະກອບດ້ວຍ:

ຫ້ອງວ່າການປົກຄອງແຂວງ, ນະຄອນ;

ພະແນກຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ ປະຈຳແຂວງ, ນະຄອນ.

ບຸກຄະລາກອນ ຂອງອົງການປົກຄອງແຂວງ, ນະຄອນ ປະກອບດ້ວຍ :

ເຈົ້າແຂວງ, ເຈົ້າຄອງນະຄອນ;

ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ;

ຫົວໜ້າ, ຮອງຫົວໜ້າຫ້ອງວ່າການ, ພະແນກການ ແລະ ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ໃນບັນດາໂຄງປະກອບກົງຈັກຂອງແຂວງ, ນະຄອນ.

**ມາດຕາ 9. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການປົກຄອງແຂວງ, ນະຄອນ**

ຫ້ອງວ່າການປົກຄອງແຂວງ, ນະຄອນ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກ ຂອງອົງການປົກຄອງແຂວງ, ນະຄອນ, ມີພາລະບົດບາດເປັນເສນາທິການໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ໃນການບໍລິຫານວຽກງານຂອງແຂວງ, ນະຄອນ; ສ້າງແຜນການ, ໂຄງການດຳເນີນງານ; ຄົ້ນຄວ້າສັງລວມ, ຮ່າງ ແລະ ກວດກາເອກະສານ; ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ; ສະໜອງຂໍ້ມູນຂ່າວສານ; ຕິດຕາມ, ຊຸກຍູ້ ແລະກວດກາການຈັດຕັ້ງປະຕິບັດນິຕິກຳຕ່າງໆທີ່ຂັ້ນເທິງ, ແຂວງ, ນະຄອນ ວາງອອກ; ສ້າງເງື່ອນໄຂອຳນວຍຄວາມສະດວກຮັບໃຊ້ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງອົງການປົກຄອງແຂວງ, ນະຄອນ .

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະ ໜ້າທີ່ລະອຽດຂອງຫ້ອງວ່າການປົກຄອງແຂວງ, ນະຄອນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 10. ທີ່ຕັ້ງ ແລະ ພາລະບົດບາດຂອງພະແນກຂອງຂະແໜງການສາຍຕັ້ງ ແລະທຽບເທົ່າປະຈຳແຂວງ, ນະຄອນ**

ພະແນກຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກ ຂອງອົງການປົກຄອງແຂວງ, ນະຄອນ ມີພາລະບົດບາດເປັນເສນາທິການໃຫ້ກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ໃນການຄຸ້ມຄອງບໍລິຫານລັດຂອງຂະແໜງການທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມການມອບຄວາມຮັບຜິດຊອບຂອງສູນກາງໃຫ້ທ້ອງຖິ່ນ.

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະໜ້າທີ່ລະອຽດຂອງພະແນກຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າຂອງແຂວງ, ນະຄອນກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ II ການສ້າງຕັ້ງແຂວງ, ນະຄອນ

**ມາດຕາ 11. ການສ້າງຕັ້ງ**

ແຂວງ, ນະຄອນ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າກັນ, ຈັດວາງຄືນໃໝ່ ຫຼື ກຳນົດ ເຂດແດນ ໂດຍການຕົກລົງຂອງສະພາແຫ່ງຊາດ ຕາມການສະເໜີຂອງນາຍົກລັດຖະມົນຕີ.

**ມາດຕາ 12. ເງື່ອນໄຂການສ້າງຕັ້ງ**

ກ. ເງື່ອນໄຂການສ້າງຕັ້ງແຂວງ

ເງື່ອນໄຂການສ້າງຕັ້ງແຂວງມີດັ່ງນີ້ :

1. ມີທີ່ຕັ້ງທາງດ້ານພູມສາດທີ່ເໝາະສົມແກ່ການປົກຄອງ, ເປັນທີ່ຕັ້ງຍຸດທະສາດໃນການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ມີເງື່ອນໄຂທາງດ້ານການພັດທະນາເສດຖະກິດ-ສັງຄົມ;
3. ມີການຂະຫຍາຍຕົວທາງດ້ານພື້ນຖານໂຄງລ່າງເຊັ່ນ: ໂທລະຄົມມະນາຄົມ, ຖະໜົນຫົນທາງ, ຕະຫຼາດ, ໄຟຟ້າ, ນ້ຳປະປາ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ;
4. ມີພົນລະເມືອງຢ່າງໜ້ອຍ ໜຶ່ງຮ້ອຍຊາວພັນຄົນ;
5. ມີ ຫ້າ ເມືອງຂຶ້ນໄປ.

ໃນກໍລະນີພິເສດ ລັດຖະບານຈະເປັນຜູ້ສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຕົກລົງ.

ຂ. ເງື່ອນໄຂການສ້າງຕັ້ງນະຄອນ

ນອກຈາກນະຄອນຫຼວງວຽງຈັນແລ້ວ ຕົວເມືອງອື່ນໆ ຈະສ້າງຕັ້ງເປັນນະຄອນໄດ້ ກໍຕໍ່ເມື່ອມີຄົບຕາມເງື່ອນໄຂດັ່ງນີ້:

1. ເປັນຕົວເມືອງໃຫຍ່, ເປັນໃຈກາງທາງດ້ານເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ, ທ່ອງທ່ຽວ, ບໍລິການ, ການຄ້າ, ຄົມມະນາຄົມຂົນສົ່ງ ແລະ ພົວພັນສາກົນ;
2. ມີບົດບາດ ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດ;
3. ມີພົນລະເມືອງຢ່າງໜ້ອຍ ແປດສິບພັນ ຄົນ;
4. ມີການຂະຫຍາຍຕົວທາງດ້ານພື້ນຖານໂຄງລ່າງ ແລະ ກິດຈະການສາທາລະນະ ທີ່ໄດ້ຮັບການພັດທະນາເປັນລະບົບແລ້ວ.

## ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ

### ມາດຕາ 13. ພາລະບົດບາດຂອງເຈົ້າແຂວງ, ເຈົ້າຄອງນະຄອນ

ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຫົວໜ້າອົງການປົກຄອງແຂວງ, ນະຄອນ, ມີພາລະບົດບາດເປັນຕົວແທນ ແລະ ຮັບຜິດຊອບຕໍ່ລັດຖະບານ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການປົກຄອງແຂວງ, ນະຄອນ.

### ມາດຕາ 14. ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ

ເຈົ້າແຂວງ, ເຈົ້າຄອງນະຄອນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບປະກັນການປະຕິບັດລັດຖະທຳມະນູນ, ກົດໝາຍ, ລະບຽບການຂອງລັດ;
2. ຮຽກໂຮມ ແລະ ເປັນປະທານກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ;
3. ຄົ້ນຄວ້າ, ວາງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະ

ມານ ຂອງທ້ອງຖິ່ນຕົນ;

4. ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງແຂວງ, ນະຄອນ; ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ; ຕິດຕາມກວດກາບັນດາໂຄງການ ຂອງສູນກາງ ທີ່ຕັ້ງຢູ່ທ້ອງຖິ່ນຂອງຕົນ;
5. ອໍານວຍ ແລະ ຄວບຄຸມບັນດາອົງການທີ່ກ່ຽວຂ້ອງ ເພື່ອຮັບປະກັນການສ້າງລາຍຮັບຢູ່ທ້ອງຖິ່ນຂອງຕົນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
6. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາ ຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມຢູ່ພາຍໃນທ້ອງຖິ່ນຂອງຕົນ;
7. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການອື່ນໆ ຕາມລະບຽບກົດໝາຍ;
8. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງຂອງທ້ອງຖິ່ນ;
9. ສັ່ງໂຈະ ຫຼື ຍົກເລີກນິຕິກໍາຕ່າງໆຂອງອົງການປົກຄອງຂັ້ນລຸ່ມ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກບັນດານິຕິກໍາຂອງຂະແໜງການ ທີ່ຂັດກັບລະບຽບກົດໝາຍ;
10. ສະເໜີ ສ້າງຕັ້ງ, ຍຸບເລີກ ເມືອງ, ເທດສະບານ ແລະ ກົງຈັກ ຂອງອົງການປົກຄອງແຂວງ, ນະຄອນ;
11. ສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ກໍານົດເຂດແດນບ້ານ;
12. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ເຈົ້າເມືອງ, ຫົວໜ້າເທດສະບານ;

    ສະເໜີ ແຕ່ງຕັ້ງ ຫຼື ຮັບເອົາການແຕ່ງຕັ້ງ ຫົວໜ້າ, ຮອງຫົວໜ້າພະແນກຂອງຂະແໜງການສາຍຕັ້ງຂັ້ນແຂວງ, ຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງຂັ້ນເມືອງ;
13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ, ນະຄອນ, ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ; ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງ, ເທດສະບານ; ຮອງຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງຂັ້ນເມືອງ ແລະ ພະນັກງານອື່ນໆຕາມລະບຽບການ;
14. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ ຕາມສິດຄຸ້ມຄອງຂອງຕົນ; ຕິດຕາມກວດກາ ແລະ ລາຍງານການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຂອງຂະແໜງການສາຍ ຕັ້ງ ແລະ ທຽບເທົ່າ ໃຫ້ກະຊວງ ແລະ ອົງການທີ່ກ່ຽວຂ້ອງ;
15. ພິຈາລະນາ,ໃຫ້ຄໍາແນະນໍາ ຫຼື ແກ້ໄຂຄໍາຮ້ອງ ແລະ ຄໍາສະເໜີຕ່າງໆຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງພະນັກງານ, ລັດຖະກອນ ແລະ ອົງການບໍລິຫານລັດໃນທ້ອງຖິ່ນຂອງຕົນ ຕາມລະບຽບກົດໝາຍ;
16. ລາຍງານ ສະພາບການຮອບດ້ານຂອງແຂວງ, ນະຄອນ ໃຫ້ລັດຖະບານຢ່າງເປັນປົກກະຕິ;

17. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ຕາມການມອບໝາຍຂອງລັດຖະບານ;
18. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15. ສິດ ແລະ ໜ້າທີ່ຂອງຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ**

ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ເປັນຜູ້ຊ່ວຍວຽກເຈົ້າແຂວງ, ເຈົ້າຄອງນະຄອນ ຮັບຜິດຊອບຂົງເຂດວຽກງານໃດໜຶ່ງ ຕາມການມອບໝາຍຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ໃນກໍລະນີທີ່ເຈົ້າແຂວງ, ເຈົ້າຄອງນະຄອນ ຕິດຂັດຍ້ອນເຫດຜົນໃດໜຶ່ງ ຜູ້ຮອງທີ່ໄດ້ຮັບການມອບໝາຍນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 16. ການແຕ່ງຕັ້ງ ແລະ ອາຍຸການຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ**

ເຈົ້າແຂວງ, ເຈົ້າຄອງນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ເຈົ້າແຂວງ, ເຈົ້າຄອງນະຄອນ ມີອາຍຸການສະໄໝລະ ຫ້າ ປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ສູງສຸດບໍ່ເກີນສອງສະໄໝ.

ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ມີອາຍຸການ ຫ້າ ປີ ແລະ ສາມາດໄດ້ຮັບການແຕ່ງຕັ້ງຄືນໃໝ່.

## ໝວດທີ IV ກອງປະຊຸມຂອງອົງການປົກຄອງ ແຂວງ, ນະຄອນ

**ມາດຕາ17. ກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ**

ກອງປະຊຸມສະໄໝສາມັນຂອງອົງການປົກຄອງແຂວງ, ນະຄອນ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນເຈົ້າແຂວງ, ເຈົ້າຄອງນະຄອນເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມອົງການປົກຄອງແຂວງ, ນະຄອນ ປະກອບດ້ວຍ: ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ; ຫົວໜ້າຫ້ອງວ່າການປົກຄອງແຂວງ, ນະຄອນ; ຫົວໜ້າພະແນກຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ. ນອກຈາກນີ້, ຖ້າເຫັນວ່າມີຄວາມຈຳເປັນອາດຈະເຊີນເຈົ້າເມືອງ, ຫົວໜ້າເທດສະບານ ຫຼື ຜູ້ຕາງໜ້າພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ອາດຈະເປີດກອງປະຊຸມສະໄໝວິສາມັນກໍໄດ້ ຕາມການຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ກອງປະຊຸມແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ຊຶ່ງເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະພາກສ່ວນທີ່ກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີທີ່ມີການຕົກລົງບັນຫາສຳຄັນ ຕ້ອງເຮັດເປັນມະຕິຂອງກອງປະຊຸມ.

**ມາດຕາ 18. ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ**

**ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ ມີດັ່ງນີ້ :**

1. ແຜນຍຸດທະສາດ,ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ນະຄອນ;
2. ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈຳປີ ຂອງແຂວງ, ນະຄອນ;
3. ການສ້າງຕັ້ງ, ຍຸບເລີກເມືອງ, ເທດສະບານ ແລະ ກົງຈັກ ຂອງອົງການປົກຄອງແຂວງ, ນະຄອນ ເພື່ອສະເໜີລັດຖະບານຕົກລົງ;
4. ຮ່າງນິຕິກຳຕ່າງໆຂອງແຂວງ, ນະຄອນ;
5. ໂຄງການລົງທຶນຂະໜາດກາງ ແລະ ໃຫຍ່ ຂອງແຂວງ, ນະຄອນ;
6. ບົດສະຫຼຸບການເຄື່ອນໄຫວວຽກງານ ຂອງແຂວງ, ນະຄອນ;
7. ບົດລາຍງານປະຈຳປີ ຕໍ່ລັດຖະບານ;
8. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນ ແລະ ວຽກງານພົວພັນຮ່ວມມືກັບຕ່າງປະເທດ.
9. ວຽກງານນະໂຍບາຍ ແລະ ພະນັກງານ.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນ ຈະນຳເອົາບັນຫາອື່ນທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນມາພິຈາລະນາກໍໄດ້.

## ພາກທີ III ອົງການປົກຄອງເມືອງ

### ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ

**ມາດຕາ 19. ເມືອງ**

ເມືອງ ແມ່ນເຂດການປົກຄອງທ້ອງຖິ່ນທີ່ຂຶ້ນກັບແຂວງ ຫຼື ນະຄອນຫຼວງ; ເມືອງໜຶ່ງປະກອບດ້ວຍຫຼາຍບ້ານ.

**ມາດຕາ 20. ພາລະບົດບາດ ຂອງ ອົງການປົກຄອງເມືອງ**

ອົງການປົກຄອງເມືອງມີພາລະບົດບາດຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການກໍ່ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກ ຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມແລະຊັບພະຍາກອນອື່ນໆ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບພາຍໃນເມືອງຂອງຕົນ ແລະ ປະຕິບັດວຽກງານການຕ່າງປະເທດ ຕາມການມອບໝາຍ ຂອງແຂວງ, ນະຄອນຫຼວງ.

## ມາດຕາ 21. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງເມືອງ

ກົງຈັກຂອງອົງການປົກຄອງເມືອງປະກອບດ້ວຍ:

ຫ້ອງວ່າການປົກຄອງເມືອງ;

ບັນດາຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເມືອງ.

ບຸກຄະລາກອນຂອງອົງການປົກຄອງເມືອງປະກອບດ້ວຍ:

ເຈົ້າເມືອງ;

ຮອງເຈົ້າເມືອງ;

ຫົວໜ້າ, ຮອງຫົວໜ້າຫ້ອງວ່າການ, ຫ້ອງການ ແລະ ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ໃນບັນດາໂຄງປະກອບກົງຈັກຂອງເມືອງ.

## ມາດຕາ 22. ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການປົກຄອງເມືອງ

ຫ້ອງວ່າການປົກຄອງເມືອງ ແມ່ນການຈັດຕັ້ງໜຶ່ງໃນໂຄງປະກອບກົງຈັກຂອງອົງການປົກຄອງເມືອງ, ມີພາລະບົດບາດເປັນເສນາທິການໃຫ້ເຈົ້າເມືອງ ໃນການບໍລິຫານວຽກງານຂອງເມືອງ; ສ້າງແຜນການ, ໂຄງການດຳເນີນງານ; ຄົ້ນຄວ້າສັງລວມ; ຮ່າງ ແລະ ກວດກາ ເອກະສານ; ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ; ສະໜອງຂໍ້ມູນຂ່າວສານ; ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດນິຕິກຳຕ່າງໆ ທີ່ຂັ້ນເທິງ ແລະເມືອງວາງອອກ; ສ້າງເງື່ອນໄຂ ອຳນວຍຄວາມສະດວກຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງອົງການປົກຄອງເມືອງ.

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະ ໜ້າທີ່ລະອຽດຂອງຫ້ອງວ່າການປົກຄອງເມືອງໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ມາດຕາ 23. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເມືອງ

ຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເມືອງ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກຂອງອົງການປົກຄອງເມືອງ, ມີພາລະບົດບາດໃນການຄຸ້ມຄອງບໍລິຫານຂະແໜງການຂອງຕົນຕາມການແບ່ງຂັ້ນຄຸ້ມຄອງຂອງແຂວງ, ນະຄອນຫຼວງ ແລະ ຂະແໜງການສາຍຕັ້ງ; ຈັດຕັ້ງປະຕິບັດນິຕິກຳຕ່າງໆຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ນະຄອນຫຼວງ ແລະ ເມືອງ.

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະ ໜ້າທີ່ລະອຽດ ຂອງຫ້ອງການຂອງຂະແໜງການສາຍຕັ້ງແລະທຽບເທົ່າປະຈໍາເມືອງ ກໍານົດໄວ້ໃນລະບຽບການສະເພາະ.

## ໝວດທີ II ການສ້າງຕັ້ງເມືອງ

### ມາດຕາ 24. ການສ້າງຕັ້ງ

ເມືອງ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າກັນ, ຈັດວາງຄືນໃໝ່ຫຼືກໍານົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫລວງ.

### ມາດຕາ 25. ເງື່ອນໄຂການສ້າງຕັ້ງ

ເງື່ອນໄຂການສ້າງຕັ້ງເມືອງ ມີດັ່ງນີ້ :

1. ມີທີ່ຕັ້ງທາງດ້ານພູມສາດທີ່ເໝາະສົມແກ່ການປົກຄອງ;
2. ມີພົນລະເມືອງຢ່າງໜ້ອຍ ສາມສິບພັນ ຄົນສໍາລັບເມືອງຢູ່ເຂດທົ່ງພຽງ ແລະ ຊາວພັນຄົນສໍາລັບເມືອງຢູ່ເຂດພູດອຍ; ໃນກໍລະນີທີ່ຈໍາເປັນລັດຖະບານຈະຕົກລົງສະເພາະ;
3. ມີພື້ນຖານໂຄງລ່າງ ແລະ ມີເງື່ອນໄຂໃນການພັດທະນາເສດຖະກິດ-ສັງຄົມ.

## ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າເມືອງ

### ມາດຕາ 26. ພາລະບົດບາດຂອງເຈົ້າເມືອງ

ເຈົ້າເມືອງ ເປັນຫົວໜ້າອົງການປົກຄອງເມືອງ, ມີພາລະບົດບາດເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການປົກຄອງເມືອງ.

### ມາດຕາ 27. ສິດ ແລະ ໜ້າທີ່ຂອງເຈົ້າເມືອງ

ເຈົ້າເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້ :

1. ຮັບປະກັນການປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;
2. ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຂອງອົງການປົກຄອງເມືອງ;
3. ຄົ້ນຄວ້າ, ວາງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງເມືອງຕົນ;
4. ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງເມືອງ; ຕ້ານ ແລະ ສະກັດກັ້ນປາ

ກິດການຫຍໍ້ທໍ້ຕ່າງໆ; ຕິດຕາມກວດກາບັນດາໂຄງການລົງທຶນຂອງສູນກາງ ແລະ ຂອງ ແຂວງ, ນະຄອນຫຼວງ ທີ່ຕັ້ງຢູ່ເມືອງຕົນ;

5. ອຳນວຍ ແລະ ຄວບຄຸມບັນດາອົງການທີ່ກ່ຽວຂ້ອງ ເພື່ອຮັບປະກັນການສ້າງລາຍຮັບຢູ່ເມືອງຂອງຕົນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
6. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມຢູ່ພາຍໃນເມືອງຂອງຕົນ;
7. ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ລະບຽບການອື່ນໆ ຕາມລະບຽບກົດໝາຍ;
8. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງຢູ່ພາຍໃນເມືອງຂອງຕົນ;
9. ສັ່ງໂຈະ ຫຼືຍົກເລີກນິຕິກຳຕ່າງໆຂອງອົງການປົກຄອງຂັ້ນລຸ່ມ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກບັນດານິຕິກຳ ຂອງອົງການປົກຄອງຂັ້ນເທິງທີ່ຂັດກັບລະບຽບກົດໝາຍ;
10. ສະເໜີ ສ້າງຕັ້ງ, ຍຸບເລີກ ບ້ານ ແລະ ກົງຈັກ ຂອງອົງການປົກຄອງເມືອງ;
11. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງເຈົ້າເມືອງ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງ;
    ສະເໜີແຕ່ງຕັ້ງ ຫຼື ຮັບເອົາການແຕ່ງຕັ້ງຮອງຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງ ແລະ ຫຼຽບເທົ່າ ຕາມລະບຽບການ;
12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ຫົວໜ້າ, ຮອງຫົວໜ້າໜ່ວຍງານຕ່າງໆຂອງເມືອງ ແລະ ພະນັກງານອື່ນໆ ຕາມລະບຽບການ; ຮັບຮອງເອົາການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານ;
13. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນຕາມສິດຄຸ້ມຄອງຂອງຕົນ; ຕິດຕາມກວດກາ ແລະ ລາຍງານການປະຕິບັດໜ້າທີ່ຂອງພະນັກງານ, ລັດຖະກອນຂອງຂະແໜງການສາຍຕັ້ງ ແລະ ຫຼຽບເທົ່າ ໃຫ້ພະແນກການສາຍຕັ້ງແຂວງ, ນະຄອນຫຼວງ;
14. ພິຈາລະນາ,ໃຫ້ຄຳແນະນຳ ຫຼື ແກ້ໄຂຄຳຮ້ອງ ແລະ ຄຳສະເໜີຕ່າງໆ ຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳທີ່ບໍ່ຖືກຕ້ອງຂອງພະນັກງານ, ລັດຖະກອນ ແລະ ອົງການບໍລິຫານລັດໃນເມືອງຂອງຕົນ ຕາມລະບຽບກົດໝາຍ;
15. ລາຍງານສະພາບການຮອບດ້ານຂອງເມືອງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງຢ່າງເປັນປົກກະຕິ;
16. ພົວພັນ ແລະ ຮ່ວມມືກັບຕ່າງປະເທດຕາມການມອບໝາຍຂອງແຂວງ, ນະຄອນຫຼວງ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28. ສິດ ແລະ ໜ້າທີ່ຂອງຮອງເຈົ້າເມືອງ**

ຮອງເຈົ້າເມືອງ ເປັນຜູ້ຊ່ວຍວຽກເຈົ້າເມືອງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບ

ໝາຍຂອງເຈົ້າເມືອງ.

ໃນກໍລະນີທີ່ເຈົ້າເມືອງຕິດຂັດຍ້ອນເຫດຜົນໃດໜຶ່ງ ຜູ້ຮອງທີ່ໄດ້ຮັບການມອບໝາຍນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 29. ການແຕ່ງຕັ້ງ, ອາຍຸການຂອງເຈົ້າເມືອງ ແລະ ຮອງເຈົ້າເມືອງ**

ເຈົ້າເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ເຈົ້າເມືອງ ມີອາຍຸການສະໄໝລະ ຫ້າ ປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ສູງສຸດ ບໍ່ເກີນສອງສະໄໝ.

ຮອງເຈົ້າເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງເຈົ້າເມືອງ, ມີອາຍຸການ ຫ້າ ປີ ແລະ ສາມາດໄດ້ຮັບການແຕ່ງຕັ້ງຄືນໃໝ່.

## ໝວດທີ IV ກອງປະຊຸມຂອງອົງການປົກຄອງເມືອງ

**ມາດຕາ 30. ກອງປະຊຸມຂອງອົງການປົກຄອງເມືອງ**

ກອງປະຊຸມສະໄໝສາມັນຂອງອົງການປົກຄອງເມືອງ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນເຈົ້າເມືອງເປັນຜູ້ຮຽກໂຮມ ແລະເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງເມືອງ ປະກອບດ້ວຍ: ຮອງເຈົ້າເມືອງ, ຫົວໜ້າຫ້ອງວ່າການປົກຄອງເມືອງ, ຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງ ແລະທຽບ ເທົ່າ. ນອກຈາກນີ້, ຖ້າເຫັນວ່າມີຄວາມຈຳເປັນ ອາດຈະເຊີນຜູ້ຕາງໜ້າພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີທີ່ມີຄວາມຈຳເປັນ ແລະຮີບດ່ວນ ອາດຈະເປີດກອງປະຊຸມສະໄໝວິສາມັນກໍໄດ້ ຕາມການຕົກລົງຂອງເຈົ້າເມືອງ.

ກອງປະຊຸມແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ຊຶ່ງເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວ ສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ; ໃນກໍລະນີທີ່ມີການຕົກລົງບັນຫາສຳຄັນ ຕ້ອງເຮັດເປັນມະຕິຂອງກອງປະຊຸມ.

**ມາດຕາ 31. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງເມືອງ**

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງເມືອງ ມີດັ່ງນີ້ :

1. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ;
2. ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈຳປີ ຂອງເມືອງ;
3. ການສ້າງຕັ້ງ, ຍຸບເລີກບ້ານ ແລະ ກົງຈັກ ຂອງອົງການປົກຄອງເມືອງ ເພື່ອສະເໜີຂັ້ນເທິງຕົກລົງ;

4. ຮ່າງນິຕິກຳຕ່າງໆຂອງເມືອງ;
5. ໂຄງການລົງທຶນພາຍໃນເມືອງຂອງຕົນ ;
6. ບົດສະຫຼຸບການເຄື່ອນໄຫວວຽກງານຂອງເມືອງ;
7. ບົດລາຍງານປະຈຳປີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
8. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງເມືອງ ແລະ ວຽກງານພົວພັນຮ່ວມມືກັບຕ່າງປະເທດ;
9. ວຽກງານນະໂຍບາຍ ແລະ ພະນັກງານ.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກອງປະຊຸມຂອງອົງການປົກຄອງເມືອງ ຈະນຳເອົາບັນຫາອື່ນທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນມາພິຈາລະນາກໍໄດ້.

## ພາກທີ IV ອົງການປົກຄອງເທດສະບານ

## ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ

### ມາດຕາ 32. ເທດສະບານ

ເທດສະບານ ແມ່ນເຂດການປົກຄອງທ້ອງຖິ່ນທີ່ເປັນຕົວເມືອງ, ເປັນທີ່ຕັ້ງຂອງສຳນັກງານປົກຄອງແຂວງ, ນະຄອນ ຫຼື ຕົວເມືອງອື່ນ ທີ່ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ສະບັບນີ້; ເປັນພື້ນທີ່ທີ່ມີຊຸມຊົນໜາແໜ້ນ, ມີການພັດທະນາທາງດ້ານເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ ແລະ ການບໍລິການ ຊຶ່ງມີບົດບາດຊຸກຍູ້ການພັດທະນາ ເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ; ເທດສະບານ ປະກອບດ້ວຍຫຼາຍບ້ານ.

### ມາດຕາ 33. ພາລະບົດບາດຂອງອົງການປົກຄອງເທດສະບານ

ອົງການປົກຄອງເທດສະບານ ແມ່ນອົງການປົກຄອງທ້ອງຖິ່ນຂັ້ນເມືອງ ໂດຍແມ່ນຫົວໜ້າເທດສະບານເປັນຫົວໜ້າ.

ອົງການປົກຄອງເທດສະບານ ມີພາລະບົດບາດໃນການຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ; ການກໍ່ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການປົກປັກ ຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ວາງ ແລະ ຈັດຕັ້ງປະຕິບັດແຜນການພັດທະນາຕົວເມືອງ, ບໍລິການສາທາລະນະ; ຮັບປະກັນຄວາມສະຫງົບ, ຄວາມເປັນ ລະບຽບຮຽບຮ້ອຍ, ສະອາດ ແລະ ສວຍງາມພາຍໃນເທດສະບານ; ພົວພັນ ແລະ ຮ່ວມມືກັບຕ່າງປະເທດຕາມການມອບໝາຍ ຂອງແຂວງ, ນະຄອນ.

### ມາດຕາ 34. ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງອົງການປົກຄອງເທດສະບານ

ກົງຈັກຂອງອົງການປົກຄອງເທດສະບານປະກອບດ້ວຍ:

ຫ້ອງວ່າການປົກຄອງເທດສະບານ,

ບັນດາຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ;

ກອງວິຊາການ ແລະ ໜ່ວຍງານບໍລິການ.

ບຸກຄະລາກອນຂອງອົງການປົກຄອງເທດສະບານ ປະກອບດ້ວຍ : ຫົວໜ້າ, ຮອງຫົວໜ້າເທດສະບານ, ຫົວໜ້າ, ຮອງຫົວໜ້າຫ້ອງວ່າການ, ຫ້ອງການ ແລະ ພະນັກງານ-ລັດຖະກອນ ທີ່ສັງກັດໃນໂຄງປະກອບກົງຈັກຂອງອົງການປົກຄອງເທດສະບານ.

**ມາດຕາ 35. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການປົກຄອງເທດສະບານ**

ຫ້ອງວ່າການປົກຄອງເທດສະບານ ແມ່ນການຈັດຕັ້ງໜຶ່ງໃນໂຄງປະກອບກົງຈັກ ຂອງອົງການປົກຄອງເທດສະບານ, ມີພາລະບົດບາດເປັນເສນາທິການໃຫ້ຫົວໜ້າເທດສະບານ ໃນການບໍລິຫານວຽກງານຂອງເທດສະບານ; ສ້າງແຜນການ, ໂຄງການດຳເນີນງານ; ຄົ້ນຄວ້າສັງລວມ; ຮ່າງ ແລະ ກວດກາເອກະສານ; ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ; ສະໜອງຂໍ້ມູນຂ່າວສານ; ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດນິຕິກຳຕ່າງໆ ທີ່ຂັ້ນເທິງ ແລະ ເທດສະບານ ວາງອອກ; ສ້າງເງື່ອນໄຂອຳນວຍຄວາມສະດວກຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງອົງການປົກຄອງເທດສະບານ.

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະ ໜ້າທີ່ລະອຽດ ຂອງຫ້ອງວ່າການປົກຄອງເທດສະບານກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 36. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເທດສະບານ**

ຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເທດສະບານ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກຂອງອົງການປົກຄອງເທດສະບານ, ມີພາລະບົດບາດໃນການຄຸ້ມຄອງບໍລິຫານຂະແໜງການຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງຂອງແຂວງ, ນະຄອນ, ຂະແໜງການສາຍຕັ້ງ, ທຽບເທົ່າ ແລະ ກອງວິຊາການ ຫຼື ໜ່ວຍງານບໍລິການ; ຈັດຕັ້ງປະຕິບັດນິຕິກຳຕ່າງໆຂອງຂັ້ນເທິງ, ແຜນພັດທະນາເສດຖະ ກິດ-ສັງຄົມຂອງແຂວງ, ນະຄອນ ແລະ ເທດສະບານ.

ໂຄງປະກອບກົງຈັກ, ບຸກຄະລາກອນ, ສິດ ແລະ ໜ້າທີ່ລະອຽດ ຂອງຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເທດສະບານ ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ II ການສ້າງຕັ້ງເທດສະບານ

**ມາດຕາ 37. ການສ້າງຕັ້ງ**

ເທດສະບານ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ, ຈັດວາງຄືນໃໝ່ ຫຼື ກຳນົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

**ມາດຕາ 38. ເງື່ອນໄຂການສ້າງຕັ້ງ**

ທຸກຕົວເມືອງທີ່ເປັນທີ່ຕັ້ງຂອງສຳນັກງານປົກຄອງແຂວງ, ນະຄອນ ລ້ວນແຕ່ເປັນເທດສະບານ. ສຳລັບຕົວເມືອງອື່ນນັ້ນ ຈະສ້າງຕັ້ງເປັນເທດສະບານໄດ້ ກໍຕໍ່ເມື່ອມີຄົບຕາມເງື່ອນໄຂດັ່ງນີ້:

1. ເປັນເຂດຊຸມຊົນທີ່ມີພົນລະເມືອງຢ່າງໜ້ອຍສິບພັນຄົນ; ໃນກໍລະນີທີ່ຈຳເປັນໃຫ້ລັດຖະບານເປັນຜູ້ຕົກລົງສະເພາະ;
2. ເປັນເຂດທີ່ມີເສດຖະກິດ, ວັດທະນະທຳ-ສັງຄົມຂະຫຍາຍຕົວ ແລະ ພື້ນຖານໂຄງລ່າງໄດ້ຮັບການພັດທະນາເປັນລະບົບ;
3. ສາມາດສ້າງລາຍຮັບເພື່ອຕອບສະໜອງລາຍຈ່າຍຂອງເທດສະບານໄດ້ ໃນລະດັບອັນຈຳເປັນ.

## ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫົວໜ້າເທດສະບານ

**ມາດຕາ 39. ພາລະບົດບາດ ຂອງຫົວໜ້າເທດສະບານ**

ຫົວໜ້າເທດສະບານ ເປັນຫົວໜ້າອົງການປົກຄອງເທດສະບານ, ມີພາລະບົດບາດເປັນຕົວ ແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການປົກຄອງເທດສະບານ.

**ມາດຕາ 40. ສິດ ແລະ ໜ້າທີ່ຂອງຫົວໜ້າເທດສະບານ**

ຫົວໜ້າເທດສະບານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບປະກັນການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;
2. ຮຽກໂຮມ ແລະ ເປັນປະທານກອງປະຊຸມຂອງອົງການປົກຄອງເທດສະບານ;
3. ຄົ້ນຄວ້າ, ວາງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງເທດສະບານຕົນ;
4. ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງເທດສະບານ; ຕ້ານ ແລະສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ; ຕິດຕາມກວດກາບັນດາໂຄງການລົງທຶນ ຂອງເທດສະບານ, ແຂວງ , ນະຄອນ ແລະຂອງສູນກາງ ທີ່ຕັ້ງຢູ່ເທດສະບານຕົນ;
5. ອຳນວຍ ແລະ ຄວບຄຸມບັນດາອົງການທີ່ກ່ຽວຂ້ອງ ເພື່ອຮັບປະກັນການສ້າງລາຍຮັບຢູ່ເທດສະບານ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

6. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ ຢູ່ພາຍໃນເທດສະບານຕົນ;
7. ອອກຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ ແລະ ລະບຽບການອື່ນໆ ຕາມລະບຽບກົດໝາຍ;
8. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງ ຢູ່ພາຍໃນເຂດເທດສະບານຕົນ;
9. ສັ່ງໂຈະ ຫຼື ຍົກເລີກນິຕິກໍາຕ່າງໆ ຂອງອົງການປົກຄອງຂັ້ນລຸ່ມ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກບັນດານິຕິກໍາຂອງອົງການປົກຄອງຂັ້ນເທິງ ທີ່ຂັດກັບລະບຽບກົດໝາຍ;
10. ສະເໜີສ້າງຕັ້ງ, ຍຸບເລີກບ້ານ ແລະ ກົງຈັກ ຂອງອົງການປົກຄອງເທດສະບານ;
11. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຮອງຫົວໜ້າເທດສະບານ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການປົກຄອງເທດສະບານ;

    ສະເໜີແຕ່ງຕັ້ງ ຫຼື ຮັບເອົາການແຕ່ງຕັ້ງຮອງຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າຕາມລະບຽບການ;
12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຫົວໜ້າ, ຮອງຫົວໜ້າກອງ, ໜ່ວຍງານຕ່າງໆ ຂອງເທດສະບານ ແລະ ພະນັກງານອື່ນໆຕາມລະບຽບການ; ຮັບຮອງເອົາການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານ;
13. ວາງ ແລະ ຈັດຕັ້ງປະຕິບັດແຜນການ, ກວດກາວຽກງານການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;
14. ກໍ່ສ້າງຜັງເມືອງ, ປັບປຸງບູລະນະບັນດາໂຄງລ່າງ, ຄຸ້ມຄອງວັດທະນະທໍາ-ສັງຄົມ, ກິລາກາຍະກໍາ ແລະ ການບໍລິການຂອງເທດສະບານຊຶ່ງລວມມີ: ຖະໜົນຫົນທາງ, ໄຟຟ້າ, ນໍ້າປະປາ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ສະຖານບັນເທີງ, ຮ່ອງລະບາຍນໍ້າ, ເກັບມ້ຽນ-ກໍາຈັດຂີ້ເຫຍື້ອ, ປ້ອງກັນຕາຝັ່ງເຈື່ອນ, ປ້ອງກັນ ແລະ ແກ້ໄຂອຸທົກກະໄພ, ອັກຄີໄພ; ອະນາໄມ ແລະ ຮັກສາສິ່ງແວດລ້ອມ, ແສງສະຫວ່າງ, ສວນສາທາລະນະ ແລະ ອື່ນໆ;
15. ຄຸ້ມຄອງ ແລະ ຄວບຄຸມການປຸກສ້າງ ແລະ ການພັດທະນາ ຕາມຜັງເມືອງໃນຂອບເຂດເທດສະບານ;
16. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນຕາມສິດຄຸ້ມຄອງຂອງຕົນ; ຕິດຕາມກວດກາ ແລະ ລາຍງານການປະຕິບັດໜ້າທີ່ຂອງພະນັກງານ, ລັດຖະກອນຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ ໃຫ້ພະແນກການສາຍຕັ້ງຂັ້ນແຂວງ;
17. ຄຸ້ມຄອງບັນຊີລາຍຮັບ-ລາຍຈ່າຍ; ນໍາໃຊ້ງົບປະມານ, ຊັບສິນ, ພາຫະນະກົນຈັກ ແລະ ອຸປະກອນຕ່າງໆຂອງເທດສະບານຕາມລະບຽບກົດໝາຍ;
18. ພິຈາລະນາ,ໃຫ້ຄໍາແນະນໍາ ຫຼື ແກ້ໄຂຄໍາຮ້ອງ ແລະ ຄໍາສະເໜີຕ່າງໆຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງພະນັກງານ, ລັດຖະກອນ ແລະ ອົງການບໍລິຫານລັດໃນເທດສະບານຂອງຕົນ ຕາມລະບຽບກົດໝາຍ;

19. ລາຍງານສະພາບການຮອບດ້ານ ຂອງເທດສະບານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຢ່າງເປັນປົກກະຕິ;
20. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງແຂວງ, ນະຄອນ;
21. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມລະບຽບກົດໝາຍ.

**ມາດຕາ 41. ສິດ ແລະ ໜ້າທີ່ຂອງຮອງຫົວໜ້າເທດສະບານ**

ຮອງຫົວໜ້າເທດສະບານ ເປັນຜູ້ຊ່ວຍວຽກຫົວໜ້າເທດສະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າເທດສະບານ.

ໃນກໍລະນີທີ່ຫົວໜ້າເທດສະບານຕິດຂັດຍ້ອນເຫດຜົນໃດໜຶ່ງ ຜູ້ຮອງທີ່ໄດ້ຮັບການມອບໝາຍນັ້ນເປັນຜູ້ວ່າການແທນ.

**ມາດຕາ 42. ການແຕ່ງຕັ້ງ ແລະ ອາຍຸການຂອງຫົວໜ້າ, ຮອງຫົວໜ້າເທດສະບານ**

ຫົວໜ້າເທດສະບານຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ຫົວໜ້າເທດສະບານ ມີອາຍຸການສະໄໝລະ ຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ບໍ່ເກີນສອງສະໄໝ.

ຮອງຫົວໜ້າເທດສະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງຫົວໜ້າເທດສະບານ, ມີອາຍຸການຫ້າປີ ແລະ ສາມາດໄດ້ຮັບການແຕ່ງຕັ້ງຄືນໃໝ່.

**ມາດຕາ 43. ລາຍຮັບຂອງເທດສະບານ**

ລາຍຮັບຂອງເທດສະບານໄດ້ມາຈາກງົບປະມານຂອງລັດ, ການເກັບຄ່າບໍລິການ, ຄ່າທຳນຽມ, ອາກອນ, ການປະກອບສ່ວນຂອງປະຊາຊົນ ແລະ ລາຍຮັບອື່ນໆ ຕາມລະບຽບກົດໝາຍ.

## ໝວດທີ IV ກອງປະຊຸມຂອງອົງການປົກຄອງເທດສະບານ

**ມາດຕາ 44. ກອງປະຊຸມຂອງອົງການປົກຄອງເທດສະບານ**

ກອງປະຊຸມສະໄໝສາມັນຂອງອົງການປົກຄອງເທດສະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນຫົວໜ້າເທດສະບານເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມອົງການປົກຄອງເທດສະບານປະກອບດ້ວຍ: ຮອງຫົວໜ້າເທດສະບານ, ຫົວໜ້າຫ້ອງວ່າການປົກຄອງເທດສະບານ, ຫົວໜ້າກອງວິຊາການ, ຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ. ນອກຈາກນີ້, ຖ້າເຫັນວ່າມີຄວາມ

ຈຳເປັນອາດຈະເຊີນຜູ້ຕາງໜ້າພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ອາດຈະເປີດກອງປະຊຸມສະໄໝວິສາມັນກໍໄດ້ ຕາມການຕົກລົງຂອງຫົວໜ້າເທດສະບານ.

ກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກກອງປະຊຸມ ຊຶ່ງເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ; ໃນກໍລະນີທີ່ມີການຕົກລົງບັນຫາສຳຄັນຕ້ອງເຮັດເປັນມະຕິຂອງກອງປະຊຸມ.

### ມາດຕາ 45. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງເທດສະບານ

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະຕົກລົງໃນກອງປະຊຸມຂອງອົງການປົກຄອງເທດສະບານ ມີດັ່ງນີ້:

1. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຂອງເທດສະບານ;
2. ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈຳປີຂອງເທດສະບານ;
3. ໂຄງການກໍ່ສ້າງ, ປັບປຸງ, ບູລະນະພື້ນຖານໂຄງລ່າງ ແລະ ການບໍລິການຂອງເທດສະບານ;
4. ການສ້າງຕັ້ງ, ຍຸບເລີກບ້ານ ແລະ ກົງຈັກ ຂອງອົງການປົກຄອງເທດສະບານ ເພື່ອສະເໜີຂັ້ນເທິງຕົກລົງ;
5. ໂຄງການລົງທຶນພາຍໃນເທດສະບານ ຂອງຕົນ;
6. ຮ່າງນິຕິກຳຕ່າງໆ ຂອງເທດສະບານ;
7. ບົດສະຫຼຸບການເຄື່ອນໄຫວວຽກງານການພັດທະນາ, ເສດຖະກິດ-ສັງຄົມຂອງເທດສະບານ;
8. ບົດລາຍງານປະຈຳປີ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ;
9. ວຽກງານປ້ອງກັນຄວາມສະຫງົບ ຂອງເທດສະບານ, ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ;
10. ວຽກງານນະໂຍບາຍ ແລະ ພະນັກງານ.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກອງປະຊຸມຂອງອົງການປົກຄອງເທດສະບານ ຈະນຳເອົາບັນຫາອື່ນທີ່ສຳຄັນ ແລະ ຈຳເປັນມາພິຈາລະນາກໍໄດ້.

# ພາກທີ V ອົງການປົກຄອງບ້ານ

## ໝວດທີ I ທີ່ຕັ້ງ, ພາລະບົດບາດ ແລະ ໂຄງປະກອບການຈັດຕັ້ງ

### ມາດຕາ 46. ບ້ານ

ບ້ານ ແມ່ນເຂດການປົກຄອງທ້ອງຖິ່ນຂັ້ນຮາກຖານ ທີ່ຂຶ້ນກັບເມືອງ ຫຼື ເທດສະບານ; ບ້ານໜຶ່ງ

ປະກອບດ້ວຍຫຼາຍຄອບຄົວ.

**ມາດຕາ 47. ພາລະບົດບາດຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີພາລະບົດບາດຄຸ້ມຄອງບໍລິຫານ, ພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຂອງບ້ານ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມພາຍໃນບ້ານຂອງຕົນ.

**ມາດຕາ 48. ໂຄງປະກອບການຈັດຕັ້ງຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີນາຍບ້ານເປັນຫົວໜ້າ, ມີຮອງນາຍບ້ານ ແລະ ໜ່ວຍງານຈຳນວນໜຶ່ງຊ່ວຍວຽກ;

**ມາດຕາ 49. ການເລືອກຕັ້ງນາຍບ້ານ**

ນາຍບ້ານ ໄດ້ຮັບການເລືອກຕັ້ງຈາກປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານ ແລະ ຖືກຮັບຮອງເອົາໂດຍເຈົ້າເມືອງ ຫຼື ຫົວໜ້າເທດສະບານ.

ໃນກໍລະນີທີ່ຈຳເປັນ ນາຍບ້ານອາດຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍເຈົ້າເມືອງ ຫຼື ຫົວໜ້າເທດສະບານ ກໍໄດ້.

ຮອງນາຍບ້ານຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍເຈົ້າເມືອງ ຫຼື ຫົວໜ້າເທດສະບານ ຕາມການສະເໜີຂອງນາຍບ້ານ.

ນາຍບ້ານ ແລະຮອງນາຍບ້ານ ມີອາຍຸການສະໄໝລະ ສາມ ປີ, ສາມາດໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງຄືນໃໝ່.

## ໝວດທີ II ການສ້າງຕັ້ງບ້ານ

**ມາດຕາ 50. ການສ້າງຕັ້ງ**

ບ້ານ ຖືກສ້າງຕັ້ງ, ໂຮມເຂົ້າ, ແຍກອອກ, ຍຸບເລີກ ຫຼື ກຳນົດເຂດແດນ ໂດຍເຈົ້າແຂວງ, ເຈົ້າ ຄອງນະຄອນ ຕາມການສະເໜີຂອງເຈົ້າເມືອງ ຫຼື ຫົວໜ້າເທດສະບານ.

**ມາດຕາ 51. ເງື່ອນໄຂການສ້າງຕັ້ງ**

ການສ້າງຕັ້ງບ້ານ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ມີທີ່ຕັ້ງພູມສາດ ທີ່ເໝາະສົມແກ່ການປົກຄອງ;

2. ຈຳນວນພົນລະເມືອງ:

ບ້ານຢູ່ໃນຕົວເມືອງ ຕ້ອງມີພົນລະເມືອງຢ່າງໜ້ອຍນຶ່ງພັນຄົນ;

ບ້ານຢູ່ເຂດທົ່ງພຽງ ຕ້ອງມີພົນລະເມືອງຢ່າງໜ້ອຍຫ້າຮ້ອຍຄົນ;

ບ້ານຢູ່ເຂດພູດອຍ, ຫ່າງໄກສອກຫຼີກຕ້ອງມີພົນລະເມືອງຢ່າງໜ້ອຍສອງຮ້ອຍຄົນ.

3. ມີເງື່ອນໄຂພັດທະນາເສດຖະກິດ-ສັງຄົມ ທີ່ໝັ້ນຄົງ.

## ໝວດທີ III ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນາຍບ້ານ

### ມາດຕາ 52. ພາລະບົດບາດຂອງນາຍບ້ານ

ນາຍບ້ານເປັນຫົວໜ້າອົງການປົກຄອງບ້ານ, ມີພາລະບົດບາດເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງເມືອງ, ເທດສະບານ ແລະ ປະຊາຊົນບັນດາເຜົ່າພາຍໃນບ້ານ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ.

### ມາດຕາ 53. ສິດ ແລະ ໜ້າທີ່ຂອງນາຍບ້ານ

ນາຍບ້ານມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິ ແລະ ຄຳສັ່ງຕ່າງໆ ຂອງຂັ້ນເທິງ, ພັດທະນາເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ; ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນບ້ານ;
2. ເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍ ໃຫ້ປະຊາຊົນພາຍໃນບ້ານຂອງຕົນ; ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ, ຊຸກຍູ້ການປະຕິບັດສິດ ແລະ ພັນທະ ຂອງພົນລະເມືອງ;
3. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ ຢູ່ພາຍໃນບ້ານຂອງຕົນ;
4. ປົກປັກຮັກສາ, ສົ່ງເສີມຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ, ສະກັດກັ້ນສິ່ງຫຍໍ້ທໍ້ ແລະ ການເຊື່ອຖືແບບງົມງວາຍ ພ້ອມທັງຊຸກຍູ້ສົ່ງ ເສີມການສຶກສາຮ່ຳຮຽນ, ການດຳລົງຊີວິດຂອງປະຊາຊົນ ໃຫ້ຖືກຕ້ອງຕາມຫຼັກສຸຂາ ນາໄມ;
5. ຄຸ້ມຄອງພົນລະເມືອງພາຍໃນບ້ານ, ສ້າງເງື່ອນໄຂໃຫ້ປະຊາຊົນມີອາຊີບຄົງທີ່ ແລະ ມີວຽກເຮັດງານທຳ;
6. ຮຽກໂຮມແລະເປັນປະທານກອງປະຊຸມຂອງບ້ານ, ອົງການປົກຄອງບ້ານ; ເຂົ້າຮ່ວມ

ກອງປະຊຸມຕາມການຮຽກໂຮມຂອງຂັ້ນເທິງ;

7. ສະເໜີເຈົ້າເມືອງ ຫຼື ຫົວໜ້າເທດສະບານພິຈາລະນາແຕ່ງຕັ້ງ, ປົດຕຳແໜ່ງຮອງນາຍບ້ານ;
8. ອອກລະບຽບ, ແຈ້ງການຕ່າງໆ ຂອງບ້ານ ທີ່ສອດຄ່ອງກັບລະບຽບກົດໝາຍ;
9. ສະເໜີຂັ້ນເທິງພິຈາລະນາສັ່ງໂຈະ ຫຼື ຢຸດຕິການປະຕິບັດກິດຈະການໃດໜຶ່ງ ທີ່ຂັດກັບກົດໝາຍ, ລະບຽບການ ແລະ ສິດຜົນປະໂຫຍດລວມຂອງບ້ານ;
10. ແກ້ໄຂຂໍ້ຂັດແຍ່ງ, ຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
11. ລາຍງານສະພາບການຮອບດ້ານຂອງບ້ານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານຢ່າງເປັນປົກກະຕິ.
12. ໄດ້ຮັບນະໂຍບາຍອຸດໜູນຕາມລະບຽບກົດໝາຍ.
13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 54. ສິດ ແລະ ໜ້າທີ່ຂອງຮອງນາຍບ້ານ**

ຮອງນາຍບ້ານ ເປັນຜູ້ຊ່ວຍວຽກນາຍບ້ານ, ຮັບຜິດຊອບວຽກໃດໜຶ່ງ ຕາມການມອບໝາຍຂອງນາຍບ້ານ. ໃນກໍລະນີທີ່ນາຍບ້ານຕິດຂັດດ້ວຍເຫດຜົນໃດໜຶ່ງ ຮອງນາຍບ້ານຜູ້ທີ່ໄດ້ຮັບມອບໝາຍນັ້ນເປັນຜູ້ປະຕິບັດໜ້າທີ່ແທນ.

## ໝວດທີ IV ກອງປະຊຸມຂອງອົງການປົກຄອງບ້ານ

**ມາດຕາ 55. ກອງປະຊຸມຂອງອົງການປົກຄອງບ້ານ**

ກອງປະຊຸມຂອງອົງການປົກຄອງບ້ານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍບ້ານ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມອົງການປົກຄອງບ້ານ ປະກອບດ້ວຍ: ຮອງນາຍບ້ານ, ຫົວໜ້າໜ່ວຍງານ, ຫົວໜ້າໜ່ວຍ. ນອກຈາກນີ້, ຖ້າເຫັນວ່າມີຄວາມຈຳເປັນ ອາດຈະເຊີນຜູ້ຕາງໜ້າພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ອາດຈະເປີດກອງປະຊຸມສະໄໝວິສາມັນກໍໄດ້ ຕາມການຕົກລົງຂອງນາຍບ້ານ.

ກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 56. ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມຂອງອົງການປົກຄອງບ້ານ**

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງບ້ານ ມີດັ່ງນີ້ :

1. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຂອງບ້ານ;
2. ການສ້າງຕັ້ງ, ຍຸບເລີກ ກົງຈັກການຈັດຕັ້ງຂອງອົງການປົກຄອງບ້ານ ເພື່ອສະເໜີຂັ້ນເມືອງພິຈາລະນາຕົກລົງ;
3. ໂຄງການລົງທຶນພາຍໃນບ້ານຂອງຕົນ;
4. ຮ່າງລະບຽບການຕ່າງໆຂອງບ້ານ;
5. ບົດສະຫຼຸບການເຄື່ອນໄຫວວຽກງານການພັດທະນາ, ເສດຖະກິດ-ສັງຄົມ ຂອງບ້ານ;
6. ບົດລາຍງານຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ;
7. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງບ້ານ.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກອງປະຊຸມຂອງອົງການປົກຄອງບ້ານ ຈະນຳເອົາບັນຫາອື່ນທີ່ສຳຄັນ ແລະ ຈຳເປັນ ມາພິຈາລະນາກໍໄດ້.

**ມາດຕາ 57. ກອງປະຊຸມບ້ານ**

ນາຍບ້ານ ເປັນຜູ້ຮຽກໂຮມກອງປະຊຸມບ້ານ; ກອງປະຊຸມບ້ານປະກອບດ້ວຍ: ນາຍບ້ານ, ຮອງນາຍບ້ານ, ຫົວໜ້າໜ່ວຍງານ, ຫົວໜ້າໜ່ວຍ, ຫົວໜ້າຄອບຄົວ ຊຶ່ງຈັດຂຶ້ນຕາມຄວາມຮຽກຮ້ອງຕ້ອງ ການຂອງວຽກງານ ຫຼື ຕາມການແນະນຳຂອງຂັ້ນເທິງ.

## ພາກທີ VI ລະບອບວິທີເຮັດວຽກ ແລະ ການເງິນ ຂອງອົງການປົກຄອງທ້ອງຖິ່ນ

**ມາດຕາ 58. ລະບອບວິທີເຮັດວຽກຂອງອົງການປົກຄອງທ້ອງຖິ່ນ**

1. ອົງການປົກຄອງທ້ອງຖິ່ນເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ປະຕິບັດຕາມລະບອບຫົວໜ້າ ບົນພື້ນຖານການຕົກລົງຂອງກອງປະຊຸມ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ;
2. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການ, ມີການກຳນົດເວລາ, ມີການຄິດໄລ່ປະສິດທິຜົນ ໂດຍອີງຕາມຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;
3. ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ; ໃນກໍລະນີທີ່ບໍ່ເປັນເອກະພາບກັນໃນເລື່ອງໃດໜຶ່ງ ໃຫ້ນຳສະເໜີອົງການຈັດຕັ້ງຂັ້ນເທິງຖັດຕົນ ເພື່ອພິຈາລະນາຕົກລົງ;
4. ຕິດຕາມກວດກາ, ປະເມີນຜົນ ແລະ ສະຫຼຸບການເຄື່ອນໄຫວວຽກງານຢູ່ທ້ອງຖິ່ນຂອງຕົນລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
5. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນຕ້ອງໄດ້ຮັບການກວດກາ ກ່ຽວກັບການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນຈາກປະຊາຊົນ, ອົງການກວດກາຂັ້ນຂອງຕົນ ແລະ ຂອງຂັ້ນເທິງຢ່າງເປັນປົກກະຕິ.

**ມາດຕາ 59. ການເງິນຂອງອົງການປົກຄອງທ້ອງຖິ່ນ**

ການເງິນຂອງອົງການປົກຄອງທ້ອງຖິ່ນ ແບ່ງອອກເປັນສອງຂັ້ນຫົວໜ່ວຍງົບປະມານຄື: ຫົວໜ່ວຍງົບປະມານຂັ້ນແຂວງ, ຫົວໜ່ວຍງົບປະມານຂັ້ນເມືອງ. ສ່ວນຂັ້ນບ້ານເປັນຫົວໜ່ວຍຮາກຖານ ໃນການເກັບລາຍຮັບ ແລະ ປະຕິບັດລາຍຈ່າຍ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍຂອງອົງການປົກຄອງຂັ້ນເມືອງ.

ການເງິນຂອງອົງການປົກຄອງທ້ອງຖິ່ນ ຕ້ອງປະຕິບັດຕາມຫຼັກການລວມສູນ ງົບປະມານແຫ່ງລັດ; ງົບປະມານທ້ອງຖິ່ນຕ້ອງຢູ່ພາຍໃຕ້ລະບຽບກົດໝາຍອັນດຽວກັນ ແລະ ປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈຳປີ ທີ່ລັດຖະບານຕົກລົງມອບໃຫ້ອົງການປົກຄອງທ້ອງຖິ່ນປະຕິບັດ.

ຜູ້ສັ່ງການເອກການເງິນ ຂອງອົງການປົກຄອງທ້ອງຖິ່ນຂັ້ນແຂວງແມ່ນເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ຫຼື ຜູ້ໄດ້ຮັບມອບສິດຕາມລະບຽບການ. ຂັ້ນເມືອງແມ່ນເຈົ້າເມືອງ ຫຼື ຫົວໜ້າເທດສະ ບານ ຫຼື ຜູ້ໄດ້ຮັບມອບສິດຕາມລະບຽບການ.

## ພາກທີ VII ບົດບັນຍັດສຸດທ້າຍ

**ມາດຕາ 60. ຕາປະທັບ**

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອໃຊ້ໃນວຽກງານທາງລັດຖະການ.

**ມາດຕາ 61. ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 62. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ, ບົດບັນຍັດ, ລະບຽບການອື່ນໆ ທີ່ຂັດກັບກົດໝາຍສະບັບນີ້ ລ້ອນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ